# ການປ່ຽນແປງດິນຟ້າ ອາກາດແມ່ນຫຍັງ?





ການປ່ຽນແປງດິນຟ້າອາກາດໝາຍເຖິງການປ່ຽນແປງທີ່ສຳຄັນຂອງຮູບແບບສະພາບອາກາດຂອງໂລກຂອງພວກເຮົາໃນໄລຍະເວລາຕ່າງໆ.

/

ໃນຊຸມປີທົດສະວັດທີ່ຜ່ານມາ, ໂລກຮ້ອນຂຶ້ນໂດຍຕົ້ນຕໍຍ້ອນກິດຈະກໍາຂອງມະນຸດ. ໃນເວລາທີ່ພວກເຮົາເຜົາໄໝ້ນໍ້າມັນເຊື້ອໄຟຟອດຊິວ (ເຊັ່ນ: ນໍ້າມັນແອັດຊັງ, ຖ່ານຫີນ ແລະ ອາຍກ໊າສທໍາມະຊາດ) ເພື່ອມາເປັນພະລັງງານ, ພວກເຮົາປ່ອຍອາຍກ໊າສທີ່ສ້າງຂຶ້ນໄປສະສົມໃນຊັ້ນບັນຍາກາດ. ອາຍກ໊າສເຫຼົ່ານີ້ສ້າງ "ປະກົດການເຮືອນແກ້ວ" ໂດຍການກັກເກັບຄວາມຮ້ອນຈາກແສງຕາເວັນທີ່ປົກກະຕິຈະປ່ອຍກັບ ຄືນສູ່ອາວະກາດ.



Climate Awareness Group

ສະພາບການໂລກທີ່ມີຄວາມຮ້ອນຂຶ້ນສົ່ງຜົນກະທົບທີ່ສັງເກດເຫັນໄດ້ເຊັ່ນ: ລະດັບນ້ຳທະເລທີ່ເພີ່ມສູງຂຶ້ນ, ເຫດການສະພາບອາກາດປ່ຽນແປງຮ້າຍແຮງເລື້ອຍໆເຊັ່ນ: ພາຍຸ, ຄື້ນຄວາມຮ້ອນ, ນ້ຳຖ້ວມ ແລະ ໄພແຫ້ງແລ້ງ. ສິ່ງຜົນໃຫ້ພືດ ແລະ ສັດບາງຊະນິດ ມີຊີວິດລອດໄດ້ຍາກຂຶ້ນ.



ເຖິງວ່າການປ່ຽນແປງຂອງດິນຟ້າອາກາດຕາມທຳມະຊາດໄດ້ເກີດຂຶ້ນ ມາຕະຫຼອດທີ່ຜ່ານມາ, ແຕ່ປະຈຸບັນອັດຕາການເພີ່ມຂຶ້ນຂອງອຸນຫະພູມແມ່ນບໍ່ເຄີຍມີມາກ່ອນ ແລະ ສ້າງສິ່ງທ້າທາຍສຳລັບຊຸມຊົນຕ່າງໆໃນທົ່ວໂລກ.



ນັກວິທະຍາສາດເຫັນດີຮ່ວມກັນວ່າການຫຼຸດຜ່ອນການປ່ອຍອາຍກ໊າສເຮືອນແກ້ວຂອງພວກເຮົາເປັນສິ່ງຈຳເປັນເພື່ອຈຳກັດຜົນກະທົບທາງລົບເຫຼົ່ານີ້ ແລະ ປ່ອຍໃຫ້ໂລກທີ່ອຳນວຍຄວາມສະດວກຕໍ່ການຢູ່ອາໄສສຳລັບຄົນລຸ້ນຕໍ່ໄປ.

ການປ່ຽນແປງຂອງດິນຟ້າອາກາດ ຈະ
ພິຈາລະນາຈາກຮູບແບບໃນໄລຍະເວລາ
ຕ່າງໆ, ບໍ່ແມ່ນແຕ່ເບິ່ງສະເພາະມື້ທີ່ເຢັນ ຫຼື
ຮ້ອນກວ່າປົກກະຕິ.

**ດັ່ງທີ່ເຈົ້າໄດ້ເຫັນ, ເມື່ອ
ເວລາຜ່ານໄປ,
ໂລກໄດ້ຮ້ອນເພີ່ມຂຶ້ນ!**




ຈາກແຜນພູມຈະເຫັນໄດ້ວ່າໃນປີ 2024